*Souphanouvong University Journal of Multidisciplinary Research and Development*
**2024,Vol. 10, No. 4, 102-110**
**https://doi.org/10.69692/SUJMRD1004102**

# Income Generating Guidelines for Souphanouvong University

**Sanh MISISOUK[1*], Soulideth KEOBOUALAPHET[2], Sangthong SIFONGXAY[3]**
*Business Administration Department, Faculty of Economics and Tourism, Souphanouvong University, Lao PDR*

***Correspondence:** Sanh MISISOUK, Office of Financial, Tel: +856 20 5537 8405, E-mail: misisouksanh@gmail.com*

Submitted: July 25, 2024
Revised: August 10, 2024
Accepted: August 21, 2024

## Abstract

The purpose of this research is to analyze determinants of the guideline for income generation of Souphanouvong University, by distributing a questionnaire to 215 employees, using descriptive statistics and reference statistics, using a stepwise multiple regression model

The results found that the guidelines to generate income from activities are based on the budget income provided by the state in combination with the creation of short-term courses, providing policies for students, improving teaching manuals, providing external academic services, expanding cooperation, transforming into a service and research center, renting space. On the one hand, to generate revenue in terms of management are creating incentives, putting in place the management rules that are oriented, having a person in charge, the revenue management task to have a single window, and providing a clear budget to be used in each period. Allow time for staff to provide services - generate income that is not too limited, each board should have a detailed plan to generate income, provide modern teaching and learning facilities, turn existing assets into capital, invest to improve the environment of the university more and more.

**Keywords:** *Income generation, guideline, activity, management*

## 1. ພາກສະເໜີ

ມະຫາວິທະຍາໄລເປັນສະຖາບັນທີ່ມີຈຸດປະສົງໃນການສ້າງສັນ, ແບ່ງປັນ ແລະ ຄົ້ນຫາຄວາມຮູ້ໃໝ່ທີ່ຄົບຖ້ວນທີ່ສາມາດໄດ້ຮັບທຶນສະໜັບສະໜູນຈາກແຫຼ່ງຕ່າງໆ ລວມທັງລັດຖະບານ ໂດຍແຫຼ່ງເຫຼົ່ານີ້ສາມາດມີຜົນກະທົບຕໍ່ໂຄງສ້າງ ແລະ ຜົນການດຳເນີນງານທາງການເງິນຂອງມະຫາວິທະຍາໄລເອງ (Radko, 2021).

ມະຫາວິທະຍາໄລສຸພານຸວົງ ເປັນສະຖາບັນການສຶກສາຊັ້ນສູງ ມີບົດບາດສຳຄັນໃນດ້ານການຈັດການຮຽນ - ການສອນ, ການຄົ້ນວິທະຍາສາດ, ການບໍລິການວິຊາການ, ການຄົ້ນຄວ້າ ຂຽນ ແລະ ຮຽບຮຽງປຶ້ມຕຳລາ ເພື່ອນຳໃຊ້ເຂົ້າໃນຫຼັກສູດການຈັດການຮຽນ-ການສອນ ແລະ ທັງເປັນບ່ອນສະໜອງຂໍ້ມູນຂ່າວສານໃຫ້ແກ່ນັກວິຊາການ ແລະ ສັງຄົມ ເພື່ອໃຫ້ບົດບາດດັ່ງກ່າວປະກົດຜົນເປັນຈິງ ໜຶ່ງໃນປັດໄຈຫຼັກຄື: ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ ຂອງພະນັກງານຄູ-ອາຈານ ເຊິ່ງເນັ້ນໃຫ້ພະນັກງານຄູ-ອາຈານມີຜົນງານທາງດ້ານການຄົ້ນຄວ້າວິທະຍາສາດ, ມີຜົນງານດ້ານການຂຽນ ແລະ ຮຽບຮຽງປຶ້ມຕຳລາ ທີ່ມີຄຸນນະພາບ ສາມາດນຳໄປໃຊ້ ແລະ ພັດທະນາໃນຫຼັກສູດການຮຽນການສອນ ຂອງມະຫາວິທະຍາໄລສຸພານຸວົງ, ພ້ອມນັ້ນ ຍັງເປັນການກະຕຸ້ນໃຫ້ພະນັກງານຄູ-ອາຈານ, ນັກຄົ້ນຄວ້າຂອງມະຫາວິທະຍາໄລສຸພານຸວົງ ມີຄວາມເອົາໃຈໃສ່ເຮັດການຄົ້ນຄວ້າວິທະຍາສາດຄຽງຄູ່ກັບວຽກງານຫຼັກສູດການຮຽນ-

ການສອນ (ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, 2023).

ສະພາບການຄຸ້ມຄອງລາຍຮັບຂອງ ມສ ແມ່ນປະກອບມີ 3 ໂຄງປະກອບສຳຄັນໄດ້ແກ່ 1) ) ຈາກພາກລັດສະໜອງໃຫ້ ປະກອບມີ ເງິນເດືອນ, ເງິນອຸດໜູນນະໂຍບາຍ, ນະໂຍບາຍຕ່າງໆ, ເງິນອຸດໜູນຄອບຄົວ, ເງິນອຸດໜູນກ່ອນຮັບບຳນານ, ເງິນອຸດໜູນເຮັດວຽກເພີ່ມ, ການຄົ້ນຄວ້າວິໄຈ, ຂຽນ ແລະ ຮຽບຮຽງ, ເງິນເບີ້ຍລ້ຽງຕ່າງໆ, ເງິນປີ່ນປົວພະນັກງານການນຳ, ເງິນກິງຈັກບໍລິຫານ, ການຊື້ ແລະ ການຊົມໃຊ້: ຄ່າບໍລິການທາງນອກ, ເງິນໄປເຮັດວຽກທາງການ, ລາຍຈ່າຍພາກບໍລິຫານປົກກະຕິອື່ນໆ, ຈ່າຍດັດສົມ, ສິ່ງເສີມ, ບຳລຸງ, ດັດສົມ ແລະ ສົ່ງເສີມດ້ານການເມືອງ ລວມເປັນເງິນ 24,025,490,000 ກີບໃນສົກ 2023-2024. 2) ລາຍຮັບຄ່າບໍລິການວິຊາການ ໄດ້ແກ່: ຄ່າລົງທະບຽນນັກສຶກສາ ປ. ຕີ ປົກກະຕິ, ປ. ຕີ ຕໍ່ເນື່ອງ ແລະ ປ. ໂທ. ລາຍຮັບຈາກຄ່າຈ້າງຮຽນຂອງນັກສຶກສາ ໄດ້ແກ່: ປະລິນຍາຕີ ປົກກະຕິ, ຕໍ່ເນື່ອງ ແລະ ໂທລວມເປັນເງິນ 5,845,034,000 ກີບ. 3) ລາຍຮັບຄ່າບໍລິການອື່ນໆ ໄດ້ແກ່: ຄ່າເຊົ່າ, ຄ່າສຳປະທານ ແລະ ຄ່າບໍລິການຈາກທາງນອກ ລວມເປັນເງິນ 101,312,000 ກີບ (ມະຫາວິທະຍາໄລ ສຸພານຸວົງ, 2023).

ສະພາບແວດລ້ອມການສ້າງລາຍຮັບທີ່ຜ່ານມາ ຂອງມະຫາວິທະຍາໄລ ສຸພານຸວົງ ຍັງບໍ່ທັນມີແຜນການ ແລະ ການຈັດການທີ່ເປັນລະບົບເທົ່າທີ່ຄວນ, ການສ້າງລາຍຮັບເປັນທີ່ປະຈັກຕາຍັງຂ້ອນຂ້າງຕໍ່າ ແລະ ບໍ່ສາມາດຕອບສະໜອງຕາມເປົ້າໝາຍໄດ້ຢ່າງພຽງພໍເທື່ອ. ນອກນັ້ນ, ມສ ຍັງບໍ່ມີຄວາມເປັນເອກະລາດໃນການຄຸ້ມຄອງຕົນເອງທາງດ້ານການເງິນເພື່ອຈັດຕັ້ງ ແລະ ປັບປຸງໃນການສ້າງລາຍຮັບ. ການສ້າງລາຍຮັບແມ່ນມີການຫຼຸດລົງຫຼາຍ ເນື່ອງຈາກ, ຍັງບໍ່ທັນມີຄວາມເປັນເອກະພາບກັນ ແລະ ບໍ່ມີທີມງານທີ່ເຮັດໜ້າທີ່ເກັບລາຍຮັບຢ່າງຊັດເຈນ. ການສ້າງລາຍຮັບແມ່ນໄດ້ຈາກຄ່າເຊົ່າ ແລະ ຄ່າບໍລິການອື່ນໆທີ່ຍັງບໍ່ສາມາດສ້າງລາຍຮັບໄດ້ພຽງພໍຕໍ່ການພັດທະນາ ມະຫາວິທະຍາໄລສຸພານຸວົງ ລວມທັງຍັງຂາດງົບປະມານສະໜອງໃຫ້ທຸກພາກສ່ວນ ຫຼື ວຽກຕ່າງໆທີ່ພວມດຳເນີນຢູ່. ໃນຂະນະທີ່, ມະຫາວິທະຍາໄລ ສຸພານຸວົງ ເປັນໜຶ່ງໃນຂະແໜງການທີ່ນອນຢູ່ໃນສະຖາບັນການສຶກສາຊັ້ນສູງ ທີ່ກຳລັງປະເຊີນກັບບັນຫາການຫຼຸດລົງຂອງນັກຮຽນນັກສຶກສາ, ບັນຫາໜີ້ສິນພາກລັດ ແລະ ບັນຫາອື່ນໆ. ອີງໃສ່ມະຕິວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ທີ່ວ່າ: ປັບປຸງໂຄງສ້າງລາຍຈ່າຍງົບປະມານແຫ່ງລັດ ຕາມທິດເພີ່ມສັດສ່ວນລາຍຈ່າຍ ເພື່ອການລົງທຶນ, ຫຼຸດຜ່ອນສັດສ່ວນລາຍຈ່າຍປົກກະຕິ ຕິດພັນກັບການຫັນປ່ຽນໃໝ່ຢ່າງແຂງແຮງໃນຂະແໜງວິຊາຊີບຂອງພາກລັດໃຫ້ໄປຕາມກົນໄກຄຸ້ມຕົນເອງ ແລະ ປັບປຸງກົງຈັກ, ໂກຕາພະນັກງານ, ລັດຖະກອນ, ພາລະກອນ, ກຳລັງປະກອບອາວຸດ ລວມທັງຜູ້ອອກແຮງງານຢູ່ຕາມວິສາຫະກິດຕ່າງໆໃຫ້ສອດຄ່ອງເພື່ອຮັບປະກັນລະດັບຄ່າຄອງຊີບອັນຈຳເປັນຂອງຜູ້ເຮັດວຽກກິນເງິນເດືອນໃນສະພາບເງື່ອນໄຂໃໝ່ (Laos, 2024) ຈາກເຫດຜົນຂ້າງເທິງຜູ້ຄົ້ນຄວ້າ ຈຶ່ງມີຄວາມສົນໃຈຄົ້ນຄວ້າເຖິງ ແນວທາງການສ້າງລາຍຮັບຂອງມະຫາວິທະຍາໄລ ສຸພານຸວົງ ໂດຍມີຈຸດປະສົງ ເພື່ອສຶກສາ ແນວທາງການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ແຕ່ປີ 2024-2028.

ມະຫາວິທະຍາໄລ ທີ່ມີແຫຼ່ງລາຍໄດ້ທີ່ເຊື່ອຖືໄດ້ ແລະ ລະບົບການເງິນທີ່ແຂງແຮງ ສາມາດປະຕິບັດຫນ້າທີ່ຫຼາຍຢ່າງໄດ້ມີປະສິດທິພາບຫຼາຍຂຶ້ນ ເຊັ່ນ ການສອນ, ການວິໄຈ ແລະ ການປະກອບກິດຈະກຳທາງທຸລະກິດ. ເພື່ອປະກັນຄວາມຍືນຍົງທາງການເງິນເຊິ່ງເຮັດໃຫ້ມະຫາວິທະຍາໄລ ສາມາດປະຕິບັດພັນທະອັນສຳຄັນໄດ້, ມະຫາວິທະຍາໄລຈຳເປັນຕ້ອງມີທຶນເຊິ່ງມີຜົນດີຕໍ່ການເງິນຂອງພວກເຂົາ. ແຕ່ຢ່າງໃດກໍຕາມ, ມີການຄາດການວ່າມະຫາວິທະຍາໄລຫຼາຍແຫ່ງອາດຈະພົບກັບຄວາມທ້າທາຍທາງການຍືນຍົງທາງການເງິນ ເນື່ອງຈາກການເພິ່ງພາແຫຼ່ງລາຍໄດ້ຫຼາຍປະເພດ (Radko, 2021).

ສະນັ້ນ, ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງ 1) ລະດັບຄວາມຄິດເຫັນຕໍ່ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບຂອງມະຫາວິທະຍາໄລ ສຸພານຸວົງ ແລະ 2) ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ເປັນຈະນຳໃຊ້ການຄົ້ນຄ້ວາແບບປະລິມານ ແລະ ຄຸນະພາບ ໂດຍໃຊ້ແບບສອບຖາມ ເປັນເຄື່ອງມືໃນການເກັບກຳ ແລະ ລວບລວມຂໍ້ມູນ.

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ ແມ່ນພະນັກງານທີ່ເຮັດວຽກສັງກັດຢູ່ ມສ ຈຳນວນ 215 ຄົນ ທີ່ສັງກັດຢູ່ໃນມະຫາວິທະຍາໄລ ສຸພານຸວົງ ໂດຍອີງຕາມວິທີຂອງທ່ານທາໂລຢາມາເນ (Taro Yamane, 1973), ເຊິ່ງປະກອບມີ 6 ຄະນະວິຊາ, ສູນ 2 ແຫ່ງ, ຫ້ອງສະໝຸດ 1 ແຫ່ງ, 1 ສະຖາບັນ ແລະ 7 ຫ້ອງການ ໂດຍຂັ້ນຕອນໃນການສຸ່ມກຸ່ມຕົວຢ່າງ ແມ່ນອີງຕາມການສຸ່ມຕົວຢ່າງແບບງ່າຍດາຍ.

### 2.2 ເຄື່ອງມືທີ່ໃຊ້

ການຄົ້ນຄວ້າຄັ້ງນີ້ ໄດ້ນຳໃຊ້ແບບສອບຖາມປະກອບມີ 3 ພາກສ່ວນ ໄດ້ແກ່: ຕຳແໜ່ງງານ ແລະ ກິດຈະກຳການສ້າງລາຍຮັບ, ຄວາມຄິດເຫັນຕໍ່ກັບແນວທາງການສ້າງລາຍຮັບ ແລະ ການໃຫ້ຄວາມສຳຄັນກັບປັດໄຈແນວທາງການສ້າງລາຍຮັບ ຂອງ ມະຫາວິທະຍາໄລ ສຸພານຸວົງ ໃນ ອີກ 5 ປີ ຂ້າງໜ້າ.

ການທົດສອບຄວາມທ່ຽງຕາມເນື້ອຫາ (Content Validity) ຜູ້ສຶກສາໄດ້ສ້າງແບບສອບຖາມ ແລ້ວນຳໄປສະເໜີຕໍ່ອາຈານທີ່ປຶກສາ ແລະ ຜູ້ຊ່ຽວຊານ, ໂດຍໃຊ້ວິທີການຫາຄ່າສຳປະສິດຄວາມສອດຄ່ອງ (Index of Item - Objective Congruence: IOC) ໂດຍມີເກນລະຫວ່າງ 0.05-1.00 ແມ່ນຖືວ່າໃຊ້ໄດ້ (Polit & Beck, 2006), ຜົນການທົດສອບໄດ້ຄ່າສຳປະສິດຄວາມສອດຄ່ອງທັງໝົດຂອງຄຳຖາມທຸກຂໍ້ ເທົ່າກັບ 0.94 ແມ່ນສາມາດນຳໃຊ້ໄດ້ໃນການເກັບຂໍ້ມູນ.

ການທົດສອບຄວາມເຊື່ອໝັ້ນ (Reliability) ຂອງແບບສອບຖາມນັ້ນ ຜູ້ສຶກສາໄດ້ນຳແບບສອບຖາມ ໄປເຮັດການທົດສອບ (Pre-test) ຈຳນວນ 30 ຊຸດ ເພື່ອກວດສອບວ່າ ຄຳຖາມຈາກແບບສອບຖາມມີຄວາມໜ້າເຊື່ອຖືພຽງໃດ, ຜົນການທົດສອບພົບວ່າ ຄວາມເຊື່ອໝັ້ນຂອງແບບສອບຖາມ ມີຄ່າສຳປະສິດ Cronbach's Alpha ເທົ່າກັບ 0.982 ໂດຍຜ່ານເກນທີ່ກຳນົດ ແມ່ນມີຄ່າຫຼາຍກວ່າ 0.80 (Nunnaly, 1978) ສະແດງວ່າ ແບບສອບຖາມຊຸດນີ້ ມີຄວາມເຊື່ອໝັ້ນສູງ ແລະ ມີຄວາມເໝາະສົມຫຼາຍສຳລັບການນຳມາເຮັດບົດວິທະຍານິພົນຄັ້ງນີ້.

### 2.3 ວິທີການເກັບກຳ ແລະ ຮວບຮວມຂໍ້ມູນ

ວິທີການເກັບກຳຂໍ້ມູນຕົວຢ່າງຈາກພະນັງງານທີ່ເຮັດວຽກຢູ່ ມະຫາວິທະຍາໄລ ສຸພານຸວົງ ຈຳແນກຕາມຈຳນວນການສຸ່ມແບບເປັນລະບົບໃນແຕ່ລະພາກສ່ວນ ແລະ ວິທີການແຈກຢາຍແມ່ນແບບງ່າຍດາຍ ແລະ ອີງຕາມຄວາມສະດວກ.

### 2.4 ການວິເຄາະຂໍ້ມູນ ແລະ ແບບຈຳລອງທີ່ໃຊ້ເຂົ້າໃນການວິເຄາະ

ໃນການຄົ້ນຄ້ວາຄັ້ງນີ້ ແມ່ນວິເຄາະຕາມຈຸດປະສົງທີ່ກຳນົດ ໂດຍໃຊ້ Program SPSS ເຂົ້າໃນການວິເຄາະຂໍ້ມູນມີລາຍລະອຽດ ດັ່ງນີ້:

1) ການຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (Standard deviation)

2) ການຫາຄ່າສຳປະສິດສະຫະສຳພັນແບບເພຍສັນ (Pearson correlation) ແມ່ນເປັນການຫາຄວາມສາພັນຂອງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະດ້ວຍກັນ.

3) ການວິເຄາະຫາຄ່າສຳປະສິດການຖົດຖອຍພະຫຸຄູນ (Stepwise multiple regression) ເພື່ອສ້າງແບບຈຳລອງການຖົດຖອຍ ໃນການພະຍາກອນປັດໄຈປັດໄຈທີ່ສົ່ງຜົນຕໍ່ຄວາມເປັນໄປໄດ້ໃນການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ.

## 3. ຜົນໄດ້ຮັບ

### 3.1 ລະດັບຄວາມຄິດເຫັນຕໍ່ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບ ຂອງ ມະຫາວິທະຍາໄລ ສຸພານຸວົງ

#### 3.1.1 ລະດັບປັດໄຈດ້ານກິດຈະກຳ ທີ່ເປັນຕົວກຳນົດລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ

ຄວາມຄິດເຫັນກ່ຽວກັບກິດຈະກຳທີ່ເປັນຕົວກຳນົດລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ພົບວ່າ ງົບປະມານລັດສະໜອງໃຫ້ ໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =3.46 ແລະ S.D=0.84, ເຊິ່ງໃນນັ້ນຫຼາຍທີ່ສຸດແມ່ນ ເງິນຄ່າບໍລິການວິຊາການ ດ້ວຍຄ່າ $\bar{X}$ =3.76 ແລະ S.D=0.94, ເງິນບໍລິຫານກິງຈັກລັດ ດ້ວຍຄ່າ $\bar{X}$ =3.57 ແລະ S.D=0.99, ງົບປະມານສົ່ງເສີມການຄົ້ນຄວ້າວິທະຍາສາດ ດ້ວຍຄ່າ $\bar{X}$ =3.52 ແລະ S.D=1.04 ແລະ ງົບປະມານສົ່ງເສີມການຂຽນປຶ້ມ ແລະ ຮຽບຮຽງ ດ້ວຍຄ່າ $\bar{X}$ =3.50 ແລະ S.D=0.96 ເຊິ່ງລ້ວນແຕ່ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ. ຄ່າບໍລິການລົງທະບຽນຂອງນັກສຶກສາ ຄ່າບໍລິການລົງທະບຽນຂອງນັກສຶກສາ ໂດຍລວມ ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ $\bar{X}$ =4.09 ແລະ S.D=0.84. ໃນນັ້ນຫຼາຍກວ່າໝູ່ແມ່ນ ຄ່າບໍລິການ ແລະ ລົງທະບຽນນັກສຶກສາປະລິນຍາຕີປົກກະຕິ ດ້ວຍຄ່າ $\bar{X}$ =4.14 ແລະ S.D=0.92, ຮອງລົງມາແມ່ນ ຄ່າບໍລິການ ແລະ ລົງທະບຽນປະລິນຍາໂທ ດ້ວຍຄ່າ ດ້ວຍຄ່າ $\bar{X}$ =4.09 ແລະ S.D=0.93, ຄ່າບໍລິການ ແລະ ລົງທະບຽນ ປະລິນຍາຕີຕໍ່ເນື່ອງ, ຄ່າບໍລິການ ແລະ ລົງທະບຽນ ປະລິນຍາຕີຕໍ່ເນື່ອງ ດ້ວຍຄ່າ $\bar{X}$ =4.03 ແລະ S.D=0.88 ເຊິ່ງລ້ວນແຕ່ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ. ຄ່າຮຽນຂອງນັກສຶກສາ ໂດຍລວມ ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ $\bar{X}$ =4.14 ແລະ S.D=0.83. ໃນນັ້ນ, ຄ່າຮຽນຂອງນັກສຶກສາ ປະລິນຍາຕີປົກກະຕິ ດ້ວຍຄ່າ $\bar{X}$ =4.19 ແລະ S.D=0.87, ຄ່າຮຽນຂອງນັກສຶກສາປະລິນຍາໂທ ດ້ວຍຄ່າ $\bar{X}$ =4.18 ແລະ S.D=0.88 ແລະ ຄ່າຮຽນຂອງນັກສຶກສາ ປະລິນຍາຕີຕໍ່ເນື່ອງ ດ້ວຍຄ່າ $\bar{X}$ =4.05 ແລະ S.D=0.89 ເຊິ່ງລ້ວນແຕ່ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ. ລາຍຮັບຄ່າບໍລິການອື່ນໆ ໂດຍລວມ ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ $\bar{X}$ =4.05 ແລະ S.D=0.93. ໃນນັ້ນ, ຄ່າສາປະທານ ດ້ວຍຄ່າ $\bar{X}$ =4.09 ແລະ S.D=0.95, ຄ່າເຊົ່າ ດ້ວຍຄ່າ $\bar{X}$ =4.04 ແລະ S.D=1.00 ແລະ ຄ່າບໍລິການຈາກທາງນອກ ດ້ວຍຄ່າ $\bar{X}$ =4.02 ແລະ S.D=0.96 ເຊິ່ງລ້ວນແຕ່ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ.

ສະຫຼຸບແລ້ວ ດ້ານກິດຈະກຳທີ່ເປັນຕົວກຳນົດລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ ໂດຍລວມ ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ $\bar{X}$ =3.89 ແລະ S.D=0.59 ເຊິ່ງມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ.

#### 3.1.2 ລະດັບປັດໄຈດ້ານພາຍໃນທີ່ເປັນຕົວກຳນົດຄວາມພ້ອມການສ້າງລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ

ຄວາມຄິດເຫັນກ່ຽວກັບປັດໄຈທາງດ້ານຄວາມພ້ອມທີ່ເກີດຈາກປັດໄຈພາຍໃນ ພົບວ່າ ດ້ານບຸກຄະລາກອນ ໂດຍລວມມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ $\bar{X}$ =3.94 ແລະ S.D=0.72, ດ້ານຄວາມພ້ອມກ່ຽວກັບງົບປະມານ ພົບວ່າ ດ້ານງົບປະມານ ໂດຍລວມ ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ $\bar{X}$ =4.21 ແລະ S.D=0.28, ດ້ານວັດສະດຸອຸປະກອນ ໂດຍລວມ ມີຄວາມສຳຄັນໃນລະດັບປານກາງ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ

$\bar{X}$ =3.08 ແລະ S.D=0.82 ແລະ ດ້ານການບໍລິຫານຈັດການ ໂດຍລວມມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ດ້ວຍຄ່າ $\bar{X}$ =3.44 ແລະ S.D=0.89.

### 3.1.3 ປັດໄຈພາຍນອກທີ່ມີຜົນຕໍ່ການສ້າງລາຍຮັບໃຫ້ກັບ ມະຫາວິທະຍາໄລ ສຸພານຸວົງ

ຄວາມຄິດເຫັນກ່ຽວກັບປັດໄຈພາຍນອກ ທີ່ມີຜົນຕໍ່ການສ້າງລາຍຮັບໃຫ້ກັບ ມະຫາວິທະຍາໄລ ສຸພານຸວົງ ຕໍ່ດ້ານນະໂຍບາຍການສ້າງລາຍຮັບ ພົບວ່າ ດ້ານນະໂຍບາຍ ໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =3.54 ແລະ S.D=0.86, ຕໍ່ດ້ານເສດຖະກິດ ໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =4.03 ແລະ S.D=0.78, ຕໍ່ດ້ານການປ່ຽນແປງທາງດ້ານສັງຄົມທີ່ມີຜົນກະທົບ ໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =3.92 ແລະ S.D=0.78, ດ້ານການປ່ຽນແປງທາງດ້ານເຕັກໂນໂລຊີສິ່ງຜົນກະທົບ ໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =3.80 ແລະ S.D=0.80, ດ້ານການປ່ຽນແປງດ້ານສະພາບແວດລ້ອມສິ່ງຜົນກະທົບ ໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =3.65 ແລະ S.D=0.81, ດ້ານກົດໝາຍ ຂໍ້ການົດ ແລະ ລະບຽບການ ໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =3.58 ແລະ S.D=0.84.

ສະຫຼຸບແລ້ວ ຄວາມຄິດເຫັນກ່ຽວກັບປັດໄຈພາຍນອກ ທີ່ມີຜົນຕໍ່ການສ້າງລາຍຮັບໃຫ້ກັບ ມະຫາວິທະຍາໄລ ສຸພານຸວົງ ຕໍ່ດ້ານນະໂຍບາຍການສ້າງລາຍຮັບ ພົບວ່າ ດ້ານນະໂຍບາຍ ໂດຍລວມຈັດຢູ່ໃນລະດັບຫຼາຍ.

### 3.1.4 ລະດັບຄວາມເປັນໄປໄດ້ສຳລັບການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ

ຄວາມຄິດເຫັນກ່ຽວກັບຄວາມເປັນໄປໄດ້ສຳລັບການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ພົບວ່າ ຄວາມເປັນໄປໄດ້ສຳລັບການສ້າງລາຍຮັບຂອງມະຫາວິທະຍາໄລສຸພານຸວົງໂດຍລວມຈັດຢູ່ໃນລະດັບຫຼາຍ ດ້ວຍຄ່າ $\bar{X}$ =3.83 ແລະ S.D=0.84. ໃນນັ້ນ, ຮັບຈາກງົບປະມານລັດສະໜອງໃຫ້ ດ້ວຍຄ່າ $\bar{X}$ =3.96 ແລະ S.D=1.03, ຮັບຈາກຄ່າບໍລິການວິຊາການ ດ້ວຍຄ່າ $\bar{X}$ =3.95 ແລະ S.D=0.99, ຮັບຈາກຄ່າລົງທະບຽນຂອງນັກສຶກສາ ດ້ວຍຄ່າ $\bar{X}$ =3.92 ແລະ S.D=1.04, ຮັບຈາກຄ່າຮຽນຂອງນັກສຶກສາ ດ້ວຍຄ່າ $\bar{X}$ =3.86 ແລະ S.D=1.05, ຮັບຈາກຄ່າບໍລິການອື່ນໆ ດ້ວຍຄ່າ $\bar{X}$ =3.75 ແລະ S.D=1.03, ດ້ານອື່ນໆ ນອກຈາກທີ່ກ່າວມາ ດ້ວຍຄ່າ $\bar{X}$ =3.52 ແລະ S.D=1.16 ເຊິ່ງລ້ວນແຕ່ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ.

## 3.2 ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ

ຈາກການທົດສອບ ພົບວ່າ ມີຄ່າ P-value < 0.05 ສາມາດອະທິບາຍ ຫຼື ພະຍາກອນ ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ ໂດຍລວມໄດ້ເຖິງ 63.7% ($R^2$ = 0.637) ເຊິ່ງປະກອບມີ 2 ປັດໄຈ ໄດ້ແກ່: ດ້ານກິດຈະກຳການສ້າງລາຍຮັບ ແລະ ດ້ານການບໍລິຫານຈັດການ ມີຜົນຕໍ່ຄວາມພ້ອມໃນການສ້າງລາຍຮັບໂດຍລວມຄວາມພ້ອມໃນການສ້າງລາຍຮັບໂດຍລວມ

ຜົນການທົດສອບ ພົບວ່າ ດ້ານກິດຈະກຳການສ້າງລາຍຮັບ, ດ້ານການບໍລິຫານຈັດການ ມີຄ່າ P-value < 0.05 ສະແດງວ່າ ມີຜົນຕໍ່ຄວາມພ້ອມໃນການສ້າງລາຍຮັບໂດຍລວມ

ໂດຍສາມາດສ້າງເປັນສົມຜົນຖົດຖອຍໃນຮູບຄະແນນດິບ ແລະ ຄະແນນມາດຕະຖານ ໄດ້ດັ່ງນີ້:

$\hat{Y}$ = 1.42 + 0.660 ດ້ານກິດຈະກຳ + 0.317 ດ້ານບໍລິຫານຈັດການ

$\hat{Z}$ = 0.579 ດ້ານກິດຈະກຳ + 0.292 ດ້ານບໍລິຫານຈັດການ

ສະຫຼຸບແລ້ວ ປັດໄຈດ້ານການສ້າງກິດຈະກຳເພື່ອສ້າງລາຍຮັບ ມີຄວາມສຳພັນທາງດຽວກັນກັບແນວທາງການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງໃນອີກ 5 ປີຂ້າງໜ້າ ເຊິ່ງມີຄວາມໝາຍວ່າຖ້າ ມະຫາວິທະຍາໄລ ສຸພານຸວົງໃຫ້ລະດັບຄວາມສຳຄັນດ້ານການສ້າງກິດຈະດຳເພື່ອເພີ່ມ

ລາຍຮັບເພີ່ມຂຶ້ນ ຈະເຮັດໃຫ້ລະດັບຄວາມເປັນໄປໄດ້ ແນວທາງການສ້າງລາຍຮັບຂອງມະຫາວິທະຍາໄລສຸພານຸວົງ ໃນອີກ 5 ປີຂ້າງໜ້າ ເພີ່ມຂຶ້ນ. ປັດໄຈດ້ານບໍລິຫານຈັດການ ມີຄວາມສຳພັນທາງດຽວກັນກັບແນວທາງການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງໃນອີກ 5 ປີຂ້າງໜ້າ ເຊິ່ງ ມີຄວາມໝາຍວ່າຖ້າ ມະຫາວິທະຍາໄລ ສຸພານຸວົງ ໃຫ້ ລະດັບຄວາມສຳຄັນດ້ານການບໍລິຫານຈັດການ ເພີ່ມຂຶ້ນ ຈະເຮັດໃຫ້ລະດັບຄວາມເປັນໄປໄດ້ ແນວທາງການສ້າງ ລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ໃນອີກ 5 ປີຂ້າງ ໜ້າ ເພີ່ມຂຶ້ນ.

## 4. ວິພາກຜົນ

### 4.1 ລະດັບຄວາມຄິດເຫັນຕໍ່ປັດໄຈທີ່ມີຜົນ ຕໍ່ແນວທາງໃນການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ

ລະດັບຄວາມຄິດເຫັນຕໍ່ປັດໄຈທີ່ມີຜົນ ຕໍ່ແນວທາງ ໃນການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ພົບ ວ່າ ຄວາມຄິດເຫັນກ່ຽວກັບກິດຈະກຳທີ່ເປັນຕົວກຳນົດລາຍ ຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ພົບວ່າ ງົບປະມານ ລັດສະໜອງໃຫ້ ໂດຍລວມຈັດຢູ່ໃນລະດັບຫຼາຍ ປະກອບ ມີ ເງິນຄ່າບໍລິການວິຊາການ, ງົບປະມານສົ່ງເສີມການ ຄົ້ນຄວ້າວິທະຍາສາດແລະ ງົບປະມານສົ່ງເສີມການຂຽນບົດ ແລະ ຮຽບຮຽງ ເຊິ່ງສອດຄ່ອງກັບຄຳເວົ້າຂອງ Oliver et al. (2008) ກ່າວວ່າ ການຫັນປ່ຽນເພື່ອເປັນສະຖາບັນການ ຄົ້ນຄວ້າຈະຊ່ວຍມະຫາວິທະຍາໄລສ້າງລາຍຮັບທີ່ຕ້ອງການ ເພື່ອຮັກສາຄວາມຍືນຍົງ. ຄ່າບໍລິການລົງທະບຽນຂອງນັກ ສຶກສາ ຄ່າບໍລິການລົງທະບຽນຂອງນັກສຶກສາ ໂດຍລວມ ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ປະກອບມີ ຄ່າບໍລິການ ແລະ ລົງທະບຽນນັກສຶກສາ ປະລິນຍາຕີປົກກະຕິ, ປະລິນຍາໂທ ແລະ ປະລິນຍາຕີຕໍ່ເນື່ອງ ເຊິ່ງສອດຄ່ອງກັບທິດສະດີຂອງ .

ຄວາມຄິດເຫັນກ່ຽວກັບປັດໄຈທາງດ້ານຄວາມພ້ອມ ທີ່ເກີດຈາກປັດໄຈພາຍໃນ ພົບວ່າ ໂດຍລວມມີຄວາມ ສຳຄັນໃນລະດັບຫຼາຍ ເພື່ອສ້າງລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ ປະກອບມີ ດ້ານບຸກຄະລາ ກອນ, ດ້ານຄວາມພ້ອມກ່ຽວກັບງົບປະມານ, ດ້ານວັດສະດຸ ອຸປະກອນ ແລະ ດ້ານການບໍລິຫານຈັດການ. ຄວາມຄິດ ເຫັນກ່ຽວກັບປັດໄຈພາຍນອກ ທີ່ມີຜົນຕໍ່ການສ້າງລາຍຮັບ ໃຫ້ກັບ ມະຫາວິທະຍາໄລ ສຸພານຸວົງ ຕໍ່ດ້ານນະໂຍບາຍ ການສ້າງລາຍຮັບ ພົບວ່າ ດ້ານນະໂຍບາຍ ໂດຍລວມຈັດຢູ່ ໃນລະດັບຫຼາຍ ປະກອບມີ ດ້ານເສດຖະກິດ, ດ້ານການ ປ່ຽນແປງທາງດ້ານສັງຄົມທີ່ມີຜົນກະທົບ, ດ້ານການ ປ່ຽນແປງທາງດ້ານເຕັກໂນໂລຊີສິ່ງຜົນກະທົບ, ດ້ານການ ປ່ຽນແປງດ້ານສະພາບແວດລ້ອມສິ່ງຜົນກະທົບ ແລະ ດ້ານ ກົດໝາຍ ຂໍ້ກຳນົດ ແລະ ລະບຽບການ. ຄວາມຄິດເຫັນ ກ່ຽວກັບຄວາມເປັນໄປໄດ້ສຳລັບການສ້າງລາຍຮັບ ຂອງ ມະຫາວິທະຍາໄລ ສຸພານຸວົງ ພົບວ່າ ຄວາມເປັນໄປໄດ້ ສຳລັບການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມຈັດຢູ່ໃນລະດັບຫຼາຍ ເຊັ່ນ: ຮັບຈາກງົບປະມານ ລັດສະໜອງໃຫ້, ຮັບຈາກຄ່າບໍລິການວິຊາການ, ຮັບຈາກ ຄ່າລົງທະບຽນຂອງນັກສຶກສາ, ຮັບຈາກຄ່າຮຽນຂອງນັກສຶກ ສາ, ຮັບຈາກຄ່າບໍລິການອື່ນໆ, ດ້ານອື່ນໆ ນອກຈາກທີ່ກ່າວ ມາ ເຊິ່ງລ້ວນແຕ່ມີຄວາມສຳຄັນໃນລະດັບຫຼາຍ ເພື່ອສ້າງ ລາຍຮັບເຂົ້າ ມະຫາວິທະຍາໄລ ສຸພານຸວົງ, ເຊິ່ງສອດຄ່ອງ ກັບການຄົ້ນຄວ້າຂອງ Mahmud et al. (2023); Adan & Keiyoro (2017); Boivie et al. (2016) ໄດ້ສະຫຼຸບ ປັດໄຈການກຳນົດທີ່ມີອິດທິພົນຕໍ່ການປະຕິບັດການສ້າງ ລາຍໄດ້, ຄຸນສົມບັດການຄຸ້ມຄອງມີອິດທິພົນຕໍ່ການສະໜັບ ສະໜູນດ້ານການຄຸ້ມຄອງສູງສຸດ. ການຝຶກອົບຮົມ, ກອງ ປະຊຸມ, ແລະສຳມະນາທີ່ເຂົ້າຮ່ວມໂດຍພະນັກງານສາມາດ ສະຫນັບສະຫນູນການຕັດສິນໃຈຂອງຜູ້ນຳສູງສຸດທີ່ ກ່ຽວຂ້ອງກັບນະໂຍບາຍການສ້າງລາຍໄດ້. ການມີສ່ວນ ຮ່ວມຂອງການຄຸ້ມຄອງມີອິດທິພົນຕໍ່ການ ສະຫນັບສະຫນູນດ້ານການຄຸ້ມຄອງສູງສຸດ. ຄຳຫມັ້ນ ສັນຍາ ແລະ ແຮງຈູງໃຈຂອງພະນັກງານສາມາດ ສະຫນັບສະຫນູນຜູ້ບໍລິຫານສູງສຸດໃນການປະຕິບັດການ ສ້າງລາຍຮັບ.

## 4.2 ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ

ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ ປະກອບມີ ດ້ານກິດຈະກຳການສ້າງລາຍຮັບ ແລະ ດ້ານການບໍລິຫານຈັດການ ມີຜົນຕໍ່ຄວາມພ້ອມໃນການສ້າງລາຍຮັບຂອງມະຫາວິທະຍາໄລ ສຸພານຸວົງ ໝາຍຄວາມວ່າ ເມື່ອມີການສ້າງກິດຈະກຳການສ້າງລາຍຮັບ ແລະ ມີການບໍລິຫານຈັດການທີ່ດີ ຈະເຮັດໃຫ້ການສ້າງລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ, ສະຫຼຸບແລ້ວ ປັດໄຈດ້ານການສ້າງກິດຈະກຳເພື່ອສ້າງລາຍຮັບ ມີການພົວພັນທາງດຽວກັນກັບແນວທາງການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ໃນອີກ 5 ປີຂ້າງໜ້າ ເຊິ່ງມີຄວາມໝາຍວ່າຖ້າ ມະຫາວິທະຍາໄລ ສຸພານຸວົງ ໃຫ້ລະດັບຄວາມສຳຄັນດ້ານການສ້າງກິດຈະກຳເພື່ອເພີ່ມລາຍຮັບເພີ່ມຂຶ້ນ ຈະເຮັດໃຫ້ລະດັບຄວາມເປັນໄປໄດ້ ແນວທາງການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ໃນອີກ 5 ປີຂ້າງໜ້າ ເພີ່ມຂຶ້ນ ແລະ ປັດໄຈດ້ານບໍລິຫານຈັດການ ມີຄວາມສຳພັນທາງດຽວກັນກັບແນວທາງການສ້າງລາຍຮັບຂອງມະຫາວິທະຍາໄລ ສຸພານຸວົງໃນອີກ 5 ປີຂ້າງໜ້າ ເຊິ່ງມີຄວາມໝາຍວ່າຖ້າ ມະຫາວິທະຍາໄລ ສຸພານຸວົງ ໃຫ້ລະດັບຄວາມສຳຄັນດ້ານການບໍລິຫານຈັດການ ເພີ່ມຂຶ້ນ ຈະເຮັດໃຫ້ລະດັບຄວາມເປັນໄປໄດ້ ແນວທາງການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ໃນອີກ 5 ປີຂ້າງໜ້າ ເພີ່ມຂຶ້ນ. ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Ungpivatsaranon & Wirayalai (2023) ໄດ້ສຶກສາກ່ຽວກັບ ແນວທາງການສ້າງລາຍຮັບຈາກການດຳເນີນງານຂອງຄະນະສິ່ງແວດລ້ອມ ແລະ ຊັບພະຍາກອນສາດ ມະຫາວິທະຍາໄລ ມະຫິດົນ. ຜົນການຄົ້ນຄວ້າພົບວ່າ ມີປັດໄຈດ້ານຄ່າບໍລິການຕ່າງໆ, ການນຳໃຊ້ຜົນກຳໄລການຄົ້ນຄວ້າ ເງິນອຸດຫນູນການຄົ້ນຄວ້າ ແລະ ການບໍລິການວິຊາການ, ການບໍລິການການສຶກສາ / ການຄົ້ນຄວ້າ / ການສຳຫຼວດ, ສຳຄັນໃນການບັນລຸເປົ້າຫມາຍ ມັນຈຳເປັນຕ້ອງມີການພັດທະນາບຸກຄະລາກອນຢ່າງຕໍ່ເນື່ອງເພື່ອເຂົ້າສູ່ທຸລະກິດ ເພື່ອສ້າງລາຍຮັບປະສິດທິຜົນແລະສະເໜີຄວາມເສີມສ້າງແຮງຈູງໃຈທີ່ຈະກະຕືລືລົ້ນ ເຊິ່ງຈະເປັນປະໂຫຍດຕໍ່ຜູ້ທີ່ກ່ຽວຂ້ອງ ທຸກຝ່າຍສາມາດສູນເສຍຢ່າງຍືນຍົງ. ສອດຄ່ອງກັບ Mahmud et al. (2023); Arar & Romi (2017) ຊີ້ໃຫ້ເຫັນວ່າ ການຊີ້ນຳຂອງການຄຸ້ມຄອງມີຜົນກະທົບຕໍ່ການສະຫນັບສະຫນູນດ້ານການຄຸ້ມຄອງສູງສຸດສຳລັບການຈັດຕັ້ງປະຕິບັດການສ້າງລາຍຮັບ. ການເຄື່ອນໄຫວຕິດຕາມກວດກາໃນວິທະຍາເຂດແມ່ນດຳເນີນໂດຍຫົວໜ້າໜ່ວຍ, ຄະນະວິຊາ ແລະ ໂຄງການສຶກສາ, ປະກອບສ່ວນເຂົ້າໃນການຄຸ້ມຄອງຂັ້ນສູງກ່ຽວກັບການຈັດຕັ້ງປະຕິບັດການສ້າງລາຍຮັບ. ນະໂຍບາຍຂອງຜູ້ບໍລິຫານຂັ້ນສູງໄດ້ຖືກສ້າງຂຶ້ນໂດຍອີງໃສ່ຄວາມສາມາດໃນການຄຸ້ມຄອງ. ການຄົ້ນພົບເຫຼົ່ານີ້ພິສູດໄດ້ວ່າການຊີ້ນຳຂອງການຄຸ້ມຄອງມີຜົນກະທົບຕໍ່ແຫຼ່ງລາຍຮັບເພີ່ມເຕີມ. ກິດຈະກຳການຊີ້ນຳມີສອງຢ່າງຕົ້ນຕໍຄື: ການຕິດຕາມ ແລະ ການທົບທວນຄືນແມ່ນສຳຄັນໃນການບໍລິຫານຈັດການ ແລະ ຍັງສອດຄ່ອງກັບຜົນການສຶກສາຂອງ Ungpivatsaranon & Wirayalai (2023) ໃນດ້ານແນວທາງການສ້າງລາຍໄດ້ຈາກການດຳເນີນງານໄດ້ແກ່: ລາຍໄດ້ຈາກການສຶກສາ, ລາຍໄດ້ຈາກການໃຫ້ບໍລິການວິຊາການ, ລາຍໄດ້ຈາກການວິໄຈ, ລາຍໄດ້ຈາກການລົງທຶນ, ລາຍໄດ້ຈາກການບໍລິຫານຊັບສິນ, ລາຍໄດ້ຈາກການດຳເນີນງານອື່ນໆ, ລາຍໄດ້ຈາກການດຳເນີນງານລະຫວ່າງກັນ ແລະ ແຕກຕ່າງກັບການສຶກສາຂອງ Nualmak (2022) ຍັງພົບວ່າ ແນວທາງການຫາລາຍໄດ້ມີຜົນມາຈາກປະສົບການເດີມ ແລະ ພື້ນຖານຄວາມສາມາດໃນການຫາລາຍໄດ້ເຂົ້າມະຫາວິທະຍາໄລ ທັງ 4 ດ້ານ ໄດ້ແກ່: ປະສົບການນັກການຕະຫຼາດ, ກິດຈະກຳສັງຄົມ, ນັກຂາຍ, ປະສົບການດ້ານຈິດຕະວິທະຍາໃນການຈູງໃຈ ແລະ ຍັງແຕກຕ່າງກັບການຄົ້ນຄວ້າຂອງ Mahmud et al. (2023) ພົບວ່າ ປັດໄຈການກຳນົດ ທີ່ມີອິດທິພົນຕໍ່ການປະຕິບັດການສ້າງລາຍໄດ້, ຄຸນສົມບັດການຄຸ້ມຄອງມີອິດທິພົນຕໍ່ການສະຫນັບສະໜູນດ້ານການຄຸ້ມຄອງສູງສຸດ.

ການຝຶກອົບຮົມ, ກອງປະຊຸມ ແລະ ສຳມະນາທີ່ເຂົ້າຮ່ວມ ໂດຍພະນັກງານສາມາດສະໜັບສະໜູນການຕັດສິນໃຈຂອງຜູ້ນຳສູງສຸດທີ່ກ່ຽວຂ້ອງກັບນະໂຍບາຍການສ້າງລາຍໄດ້. ການມີສ່ວນຮ່ວມຂອງການຄຸ້ມຄອງມີອິດທິພົນຕໍ່ການສະໜັບສະໜູນດ້ານການຄຸ້ມຄອງສູງສຸດ ຄຳໝັ້ນສັນຍາ ແລະ ແຮງຈູງໃຈຂອງພະນັກງານ ສາມາດສະໜັບສະໜູນຜູ້ບໍລິຫານສູງສຸດໃນການປະຕິບັດການສ້າງລາຍຮັບ.

## 5. ສະຫຼຸບ

1) ລະດັບຄວາມຄິດເຫັນຕໍ່ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມແມ່ນໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ.

2) ປັດໄຈທີ່ມີຜົນຕໍ່ແນວທາງໃນການສ້າງລາຍຮັບຂອງ ມະຫາວິທະຍາໄລ ສຸພານຸວົງ ປະກອບມີ ດ້ານກິດຈະກຳການສ້າງລາຍຮັບ ແລະ ດ້ານການບໍລິຫານຈັດການ ມີຜົນຕໍ່ຄວາມພ້ອມໃນການສ້າງລາຍຮັບຂອງມະຫາວິທະຍາໄລ ສຸພານຸວົງ.

## 6. ຂໍ້ຂັດແຍ່ງ

ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ມະຫາວິທະຍາໄລ ສຸພານຸວົງ. (2023). ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ມະຫາວິທະຍາໄລ ສຸພານຸວົງ ປະຈຳສົກສຶກສາ 2022-2023 ແລະ ທິດທາງແຜນພັດທະນາ ປະຈຳສົກສຶກສາ 2023-2024.

ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມະຫາວິທະຍາໄລ ສຸພານຸວົງ. (2023). ໂຄງການຕິດຕາມ, ກວດກາ ແລະ ປະເມີນໂຄງການຄົ້ນຄວ້າວິທະຍາສາດ ຂອງ ມະຫາວິທະຍາໄລສຸພານຸວົງ ປະຈຳປີ 2023.

Adan, M.S., & Keiyoro, P. (2017). Factors influencing the implementation of income generating projects in public secondary schools in Isiolo North sub-county, Kenya. *International Academic Journal of Information Sciences and Project Management*, *2*(1).

Arar, K., & Romi, A.A. (2016).. School-based management: Arab education system in Israel. *Journal of Education Administration*, *54*(2), 191-208. https://doi.org/DOI: 10.1108/JEA-09-2014-0118

Boivie, S., Michael, K.B., Ruth, V.A., & Joel, L.J. (2016). Are Boards Designed to Fail? The Implausibility of Effective Board Monitoring. *Academy of Management Annals*, *10*(1).

https://doi.org/https://doi.org/10.5465/19416520.2016.1120957

Laos. (2024). *The Resolution on Creating an Independent Economy in the New Era*. Vientaine Capital, Lao PDR.

Mahmud, A., Susilowati, N., Sari, P. N., & Sakitri, W. (2023). Managerial Factors and Income-Generation: The Mediating Role of Top Management Support at an Indonesian State University. *The Journal of Behavioral Science*, *18*(3), 101–119. Retrieved from https://so06.tci-thaijo.org/index.php/IJBS/article/view/266151

Mahmud, A., Susilowati, N., Anisykurlillah, I., & Sari, P.N. (2023). Increasing Income Generation: The Role of Staff Participation and Awareness. *International Journal Financial Studies*, *11*(1), 25. https://doi.org/10.3390/ijfs11010025

Nualmak, J. (2022). *The ways of Earning Money for the University by the Support Staff: Case Study of Prince of Songkla, Hat Yai Campus[Thesis]*. Prince of Songkhla University.

Nunnally, J. C. (1978). *Psychometric theory (2nd ed)*. New York: McGraw-Hill.

Oliver, G., Henry, M., Rose, C.N., & Streete, T. (2008). Strategies for Income Generation at the University of Technology, Jamaica. *Latin American and Caribbean Journal of Engineering Education*, *2*(1), 1-6.

Polit, D. F., & Beck, C. T. (2006). The content validity index: are you sure you know what's being reported? critique and recommendations. *Research in Nursing & Health, 29*(5), 489-497.

Radko, N. (2021). Income Generation Activities from Academics at Universities and Engagement with Stakeholders. *Международные процессы, 19*(4), 123-150. https://doi.org/DOI 10.17994/IT.2021.19.4.67.1

Ungpivatsaranon, J., & Wirayalai, Y. (2023). Generating Income from the Operations of Faculty of Environmental and Resources Science Mahidol University. *Journal of Management Sciences Kasetsart University, 2*(1).

Yamane, T. (1973). *Statistics: An Introductory Analysis*. 3rd Edition, Harper and Row, New York.